# ການສຶກສາປະເມີນການຮຽນ
# ການສອນແບບຮຽນຮ່ວມ
# ສໍາລັບປີ 2024-2026



## ພາບລວມ ແລະ ວິທີການປະຕິບັດ





# ເປັນຫຍັງຄວາມຫຼາກຫຼາຍ ແລະ ການມີສ່ວນຮ່ວມ ຈຶ່ງສຳຄັນຕໍ່ການຮຽນຮູ້?

ຄວາມຫຼາກຫຼາຍໃນຫ້ອງຮຽນ ເປັນການສົ່ງເສີມການຮຽນຮູ້ຂອງນັກຮຽນ. ເມື່ອໄດ້ຮັບການປູກຝັງແລ້ວ, ຄວາມຫຼາກຫຼາຍໃນຫ້ອງຮຽນຈະເປັນການເປີດໂອກາດໃຫ້ເກີດຂະບວນການຮຽນຮູ້ທີ່ມີຊີວິດຊີວາ ເຊິ່ງສົ່ງເສີມໃຫ້ເກີດມີ ຄວາມເຫັນອົກເຫັນໃຈ, ການຄົ້ນຄິດແບບວິເຄາະ, ການແກ້ໄຂບັນຫາ, ແລະ ມີແນວຄວາມຄິດສ້າງສັນ.

ສປປ ລາວ ເປັນປະເທດທີ່ອຸດົມສົມບູນໄປດ້ວຍຄວາມຫຼາກຫຼາຍທາງດ້ານວັດທະນະທຳ, ເຊິ່ງປະກອບມີຊົນເຜົ່າທີ່ເປັນທາງການ 50 ຊົນເຜົ່າ ແລະ ປະກອບດ້ວຍຊົນເຜົ່າຍ່ອຍອີກ 167 ກຸ່ມ ທີ່ມີພາສາທ້ອງຖິ່ນ, ພາສາຂອງຊົນເຜົ່າ, ວັດທະນະທຳ ແລະ ປະເພນີທີ່ແຕກຕ່າງກັນ.[1] ພົນລະເມືອງລາວຫຼາຍກວ່າ 40% ແມ່ນເວົ້າພາສາອື່ນໆທີ່ນອກເໜືອຈາກພາສາລາວ. ຄວາມຫຼາກຫຼາຍທາງດ້ານພາສາ ຄຽງຄູ່ກັບທັດສະນະມຸມມອງທີ່ຫຼາກຫຼາຍທີ່ຖືກຫຼໍ່ຫຼອມໂດຍເພດ, ຄວາມພິການ, ພູມສັນຖານ, ແລະ ພື້ນຖານເສດຖະກິດ-ສັງຄົມ ໄດ້ສ້າງໂອກາດອັນອຸດົມສົມບູນສຳລັບການຮຽນຮູ້ ແລະ ການເຕີບໂຕ.

ການປະເມີນຜົນການຮຽນຂອງນັກຮຽນໃນທົ່ວປະເທດໃນ ສປປ ລາວ ສະແດງໃຫ້ເຫັນວ່າ ນັກຮຽນທີ່ມີພາສາແມ່ເປັນພາສາອື່ນທີ່ບໍ່ແມ່ນພາສາລາວ ມັກຈະໄດ້ຄະແນນສອບເສັງມາດຕະຖານຕ່ຳກວ່າ ເມື່ອທຽບໃສ່ເພື່ອນຮ່ວມຫ້ອງຜູ້ທີ່ເວົ້າພາສາລາວໄດ້. ເຊັ່ນດຽວກັນ, ນັກຮຽນທີ່ຂາດຮຽນເລື້ອຍໆ, ຜູ້ທີ່ມາຈາກຄອບຄົວທີ່ມີພື້ນຖານເສດຖະກິດ-ສັງຄົມທີ່ດ້ອຍກວ່າ ຫຼື ຜູ້ທີ່ມີຄວາມພິການ ກໍມີທ່າອ່ຽງທີ່ຈະໄດ້ຄະແນນສອບເສັງຕ່ຳກວ່າເຊັ່ນກັນ. ເມື່ອນັກຮຽນຄົນໃດມີປັດໄຈເຫຼົ່ານີ້ທັບຊ້ອນກັນເຊັ່ນ: ເດັກຍິງທີ່ບໍ່ໄດ້ເວົ້າພາສາລາວຢູ່ເຮືອນ ແລະ ມີຄວາມພິການ, ພວກເຮົາຍິ່ງເຫັນໄດ້ເຖິງຄວາມແຕກໂຕນທາງດ້ານການຮຽນຢ່າງຊັດເຈນຫຼາຍຂຶ້ນ.[2]

**ການສຶກສາຮຽນຮ່ວມ** ໝາຍເຖິງ ນັກຮຽນທຸກຄົນສາມາດເຂົ້າເຖິງການສຶກສາທີ່ມີຄຸນນະພາບ, ເຊິ່ງຕອບສະໜອງຄວາມຕ້ອງການອັນຫຼາກຫຼາຍຂອງເຂົາເຈົ້າໄດ້ຢ່າງມີປະສິດທິພາບ ໃນສະພາບແວດລ້ອມທີ່ເອື້ອອຳນວຍ, ມີການຍອມຮັບ, ເຄົາລົບ ແລະ ໃຫ້ສະໜັບສະໜູນເຊິ່ງກັນ ແລະ ກັນ. ການສຶກສາແບບມີສ່ວນຮ່ວມເກີດຂຶ້ນໃນສະຖານການສຶກສາທີ່ມີຄວາມຫຼາກຫຼາຍ ໂດຍນັກຮຽນທີ່ມີພື້ນຖານ ແລະ ມີຄວາມສາມາດທີ່ແຕກຕ່າງກັນ ໄດ້ຮັບການຊຸກຍູ້ສະໜັບສະໜູນ ເພື່ອເອົາຊະນະອຸປະສັກຕ່າງໆທີ່ຈະນຳໄປສູ່ການຈຳແນກ.

**ການສອນແບບຮຽນຮ່ວມ** ແມ່ນການທີ່ຄູສອນອຳນວຍຄວາມສະດວກໃຫ້ແກ່ນັກຮຽນທີ່ມີຄວາມຕ້ອງການໃນການຮຽນຮູ້ອັນຫຼາກຫຼາຍ.

**ການຮຽນຮ່ວມ** ແມ່ນການມີສ່ວນຮ່ວມ ແລະ ການຮຽນຮູ້ສຳລັບນັກຮຽນ ທີ່ມີຄວາມຫຼາກຫຼາຍທາງດ້ານເພດ, ຄວາມສາມາດ, ພາສາ ແລະ ພື້ນຖານເສດຖະກິດ-ສັງຄົມ.

*ເພື່ອແກ້ໄຂຄວາມແຕກໂຕນເຫຼົ່ານີ້, ແຜນພັດທະນາຂະແໜງການສຶກສາ ແລະ ກິລາ ຂອງກະຊວງສຶກສາທິການ ແລະ ກິລາ (ສສກ) ປີ 2021-2025 (ESSDP ປີ 2021-2025) ໄດ້ວາງເປົ້າໝາຍໃສ່ "ການເພີ່ມຈຳນວນນັກຮຽນຜູ້ທີ່ສຳເລັດການສຶກສາໃນທຸກໆລະດັບທີ່ມີຜົນການຮຽນທີ່ດີຂຶ້ນ* ***ໂດຍເນັ້ນໜັກເປັນພິເສດໃສ່ກັບນັກຮຽນຜູ້ທີ່ດ້ອຍໂອກາດ ແລະ ແນໃສ່ຄວາມສະເໝີພາບຍິງ-ຊາຍ."***[3]

ການຮ່ວມມືສອງຝ່າຍລະຫວ່າງລັດຖະບານອົດສະຕຣາລີ ແລະ ລັດຖະບານ ສປປ ລາວ ໂດຍຜ່ານແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນສຳລັບການສຶກສາຂັ້ນພື້ນຖານໃນ ສປປ ລາວ (ແຜນງານບີຄວາ) ໄດ້ສະທ້ອນໃຫ້ເຫັນເຖິງຄວາມມຸ່ງໝັ້ນຮ່ວມກັນໃນການແກ້ໄຂຄວາມບໍ່ສະເໝີພາບທາງດ້ານສັງຄົມ ແລະ ສົ່ງເສີມ "ຄວາມສະເໝີພາບຍິງ-ຊາຍ ແລະ ສິດທິຂອງຄົນພິການ"[4] ໂດຍມີເປົ້າໝາຍຂອງແຜນງານໃນການ "*ສົ່ງເສີມໃຫ້ເດັກນ້ອຍໃນເກນອາຍຸເຂົ້າຮຽນຂັ້ນປະຖົມໃນ ສປປ ລາວ, ໂດຍສະເພາະແມ່ນຜູ້ທີ່ດ້ອຍໂອກາດ, ມີຄວາມຫ້າວຫັນປະກອບສ່ວນໃນການຮຽນຫຼາຍຂຶ້ນ ແລະ ມີຜົນການຮຽນທີ່ດີຂຶ້ນ.*"[5]

---

1 ຄູ່ມືແນະນຳການກວດກາການເຂົ້າຮຽນຂອງນັກຮຽນຈາກ ສສກ, ລວມທັງພາສາຕ່າງໆທີ່ໃຊ້ໃນ ສປປ ລາວ ຕໍ່ກັບກຸ່ມປະຊາກອນ ຈາກການສຳຫຼວດປະຊາກອນປີ 2015 ໂດຍອີງຕາມ ກອງປະຊຸມສະໄໝສາມັນ ຄັ້ງທີ 6 ຂອງສະພາແຫ່ງຊາດ ເລກທີ 108/ສພຊ, ວັນທີ 5 ທັນວາ 2018.

2 UNESCO ແລະ UNICEF (2021) *ການທົບທວນຄວາມຄືບໜ້າພາຍໃນ 5 ປີຂອງ SDG 4 – ການສຶກສາຮອດປີ 2030 ໃນອາຊີ-ປາຊີຟິກ.* "ການຮູ້ໜັງສືຢູ່ໃນ ສປປ ລາວ ສຳລັບບັນດາແມ່ຍິງຊົນນະບົດ, ຜູ້ທີ່ທຸກຍາກທີ່ສຸດ ແລະ ຊົນເຜົ່າທີ່ເປັນສ່ວນນ້ອຍ ແມ່ນຢູ່ໃນລະດັບຕ່ຳທີ່ສຸດ.

3 ຜົນໄດ້ຮັບລະດັບສູງ (HLO) 1, ESSDP 2021 – 2025.

4 Commonwealth of Australia, DFAT, ນະໂຍບາຍການພັດທະນາສາກົນຂອງອົດສະຕຣາລີ

5 BEQUAL https://bequal-laos.org/

# ການສຶກສາປະເມີນການຮຽນການສອນແບບຮຽນຮ່ວມແມ່ນຫຍັງ?

ໃນປີ 2024, ກະຊວງສຶກສາທິການ ແລະ ກິລາ (ສສກ) ໄດ້ຮ່ວມມືກັບລັດຖະບານອົດສະຕຣາລີ ເພື່ອເລີ່ມຕົ້ນການສຶກສາຄົ້ນຄວ້າທີ່ໜ້າຕື່ນເຕັ້ນໃນການສຳຫຼວດ ຄວາມຜູກພັນກັບໂຮງຮຽນ ແລະ ການມີສ່ວນຮ່ວມຂອງນັກຮຽນ ລວມເຖິງຜົນກະທົບຂອງສອງປັດໄຈນີ້ທີ່ມີຕໍ່ຜົນການຮຽນຂອງເຂົາເຈົ້າ.

ການສຶກສາປະເມີນການຮຽນການສອນແບບຮຽນຮ່ວມ (ການສຶກສາການຮຽນການສອນແບບຮຽນຮ່ວມ) ແມ່ນການສຶກສາຄົ້ນຄວ້າໄລຍະຍາວແບບຕໍ່ເນື່ອງທີ່ດຳເນີນການເປັນເວລາ 3 ປີ ໃນ 30 ເມືອງເປົ້າໝາຍ ຂອງ 7 ແຂວງທີ່ໄດ້ຮັບການສະໜັບສະໜູນຈາກແຜນງານບີຄວາ.

ການສຶກສາດ້ານການຮຽນຮ່ວມນີ້ ແມ່ນກຳລັງຊອກຫາແນວທາງການສອນທີ່ມີຄຸນນະພາບ ເຊິ່ງຈະນຳໄປສູ່ການມີສ່ວນຮ່ວມຂອງນັກຮຽນທີ່ເພີ່ມຂຶ້ນ ແລະ ມີຜົນການຮຽນທີ່ດີຂຶ້ນ ສຳລັບນັກຮຽນ ຊັ້ນ ປ.1, ປ.2 ແລະ ປ.3. ການສຶກສານີ້ແມ່ນເນັ້ນໜັກໃສ່ປະສົບການຂອງນັກຮຽນຍິງ ແລະ ນັກຮຽນຊາຍທີ່ດ້ອຍໂອກາດໃນລະບົບການຮຽນ ອັນເນື່ອງມາຈາກພາສາທ້ອງຖິ່ນທີ່ເວົ້າຢູ່ເຮືອນ, ການດຳລົງຊີວິດຢູ່ກັບຄວາມພິການ ຫຼື ການຂາດຮຽນເລື້ອຍໆ. ຜົນໄດ້ຮັບ ແລະ ຂໍ້ມູນເຊີງເລິກຈາກການສຶກສານີ້ ຈະຊ່ວຍໃຫ້ຜູ້ທີ່ເຮັດວຽກດ້ານການສຶກສາໃນທຸກໆຂັ້ນ ເຂົ້າໃຈໄດ້ດີຂຶ້ນກ່ຽວກັບສິ່ງທ້າທາຍ ແລະ ໂອກາດໃນການເສີມສ້າງຄວາມຜູກພັນຂອງນັກຮຽນກັບໂຮງຮຽນ, ການມີສ່ວນຮ່ວມໃນການຮຽນ ແລະ ຜົນການຮຽນຂອງນັກຮຽນ.

ການສຶກສາດ້ານການຮຽນຮ່ວມ ປະກອບມີການເກັບກຳລວບລວມຂໍ້ມູນດ້ານຄຸນນະພາບ ແລະ ຂໍ້ມູນດ້ານປະລິມານຕະຫຼອດໄລຍະເວລາສາມປີ. ໃນລະຫວ່າງ ເດືອນກຸມພາ ຫາ ເດືອນມີນາ ໃນແຕ່ລະປີ ແມ່ນມີການດຳເນີນການຄົ້ນຄວ້າກໍລະນີສຶກສາດ້ານຄຸນນະພາບ ໂດຍຜ່ານການສຳພາດນັກຮຽນ, ພໍ່ແມ່ຜູ້ປົກຄອງ ແລະ ຄູສອນໃນ 21 ໂຮງຮຽນເປົ້າໝາຍ. ໃນເດືອນເມສາຂອງແຕ່ລະປີ ແມ່ນມີການສອບເສັງວິຊາພາສາລາວ ໃນ 120 ໂຮງຮຽນ, ໂດຍເລີ່ມຈາກນັກຮຽນ ຊັ້ນ ປ.1 ໃນປີ 2024, ແລະ ຕິດຕາມຄວາມກ້າວໜ້າຂອງເຂົາເຈົ້າໄປຈົນເຖິງຊັ້ນ ປ.2 ແລະ ປ.3. ໃນແຕ່ລະພາກຮຽນ ແມ່ນມີການລວບລວມຂໍ້ມູນເພື່ອການຕິດຕາມເຊັ່ນ: ມີການເກັບກຳການສັງເກດການສອນໃນຫ້ອງຮຽນຮ່ວມກັບຄູ ແລະ ຜູ້ທີ່ໃຫ້ການຊ່ວຍເຫຼືອເຂົາເຈົ້າ.



### ຄຳຖາມຫຼັກໆທີ່ເປັນແນວທາງໃນການສຶກສາການຮຽນການສອນແບບຮຽນຮ່ວມມີຄື:

1. ວິທີການສິດສອນໄດ້ຮັບການປັບປຸງແບບໃດ ແລະ ໜ້ອຍຫຼາຍຊ່ຳໃດໃນກຸ່ມຕົວຢ່າງຂອງຄູທີ່ພວກເຮົາສຶກສາ?
2. ວັດທະນະທຳການຮຽນຮ່ວມສຳລັບນັກຮຽນແມ່ນໄດ້ຖືກສ້າງຂຶ້ນແບບໃດ?
3. ວິທີການສິດສອນທີ່ໄດ້ຮັບການປັບປຸງນັ້ນ ສົ່ງຜົນແນວໃດຕໍ່ກັບການມີສ່ວນຮ່ວມ ແລະ ການຮຽນຂອງນັກຮຽນ ໃນກຸ່ມຕົວຢ່າງຂອງນັກຮຽນທີ່ພວກເຮົາສຶກສາ?
4. ການມີສ່ວນຮ່ວມ ແລະ ການຮຽນຂອງນັກຮຽນມີການປ່ຽນແປງຄືແນວໃດ ແລະ ໜ້ອຍຫຼາຍຊ່ຳໃດ ໃນກຸ່ມຕົວຢ່າງຂອງນັກຮຽນທີ່ພວກເຮົາສຶກສາ?



## ວິທີການວິເຄາະຂໍ້ມູນແບບສະເພາະ: ຂອບໜ້າວຽກກ່ຽວກັບຄວາມຜູກພັນຂອງນັກຮຽນກັບໂຮງຮຽນ

ພວກເຮົາທຸກຄົນລ້ວນແຕ່ຢາກຈະຮູ້ສຶກວ່າຕົນເອງເປັນສ່ວນໜຶ່ງ. ຄວາມຜູກພັນ ແລະ ເປັນສ່ວນໜຶ່ງຂອງຄອບຄົວ, ຊຸມຊົນ ແລະ ສັງຄົມແມ່ນເປັນພື້ນຖານສຳຄັນທີ່ຊ່ວຍໃຫ້ພວກເຮົາເຕີບໃຫຍ່ ແລະ ພັດທະນາຕົນເອງໃຫ້ໄດ້ດີທີ່ສຸດ. ການຄົ້ນຄວ້າໄດ້ສະແດງໃຫ້ເຫັນວ່າ ໃນເວລາທີ່ນັກຮຽນມີຄວາມຮູ້ສຶກໃກ້ຊິດກັບຄູ ແລະ ເພື່ອນຮ່ວມຫ້ອງຮຽນຂອງເຂົາເຈົ້າ ແລະ ເຂົາເຈົ້າຮູ້ສຶກວ່າໂຮງຮຽນເປັນຄືກັນກັບຄອບຄົວແລ້ວ, ນັກຮຽນຈະມີຄວາມສຸກໃນເວລາທີ່ຢູ່ໂຮງຮຽນ ແລະ ມີຜົນການຮຽນທີ່ດີຂຶ້ນ.[6]

**ທ່ານມີຄວາມຊົງຈຳໃນໄວເດັກກ່ຽວກັບຄູສອນທີ່ສົ່ງຜົນກະທົບໃນທາງບວກກັບຊີວິດຂອງທ່ານຫຼືບໍ່? ເຂົາເຈົ້າເປັນແນວໃດ?** ບາງເທື່ອ ຄູສອນເຫຼົ່ານັ້ນອາດຈະຮັບຟັງທ່ານຢ່າງຕັ້ງໃຈ ຫຼື ສົ່ງຮອຍຍິ້ມໃຫ້ກຳລັງໃຈຕໍ່ທ່ານ. ບາງເທື່ອເຂົາເຈົ້າອາດຈະເຫັນເຖິງຄວາມສົນໃຈເປັນພິເສດຂອງທ່ານ ແລະ ຊຸກຍູ້ໃຫ້ທ່ານຍ່າງໄປຕາມຄວາມຝັນຂອງຕົນ. ສິ່ງເຫຼົ່ານີ້ແມ່ນເຂົາເຈົ້າສ້າງ **ຄວາມຮູ້ສຶກຜູກພັນ** ໃຫ້ແກ່ທ່ານ ເຊິ່ງເປັນ**ບ່ອນທີ່ປອດໄພ**ທີ່ເຮັດໃຫ້ທ່ານຮູ້ສຶກປອດໄພ, ມີ**ຄວາມສາມັກຄີ**ກັນໃນກຸ່ມ ແລະ ມີການຮັບຮູ້ເຖິງ**ຄວາມສຳຄັນ**ຂອງການປະກອບສ່ວນທີ່ເປັນຜົນງານສະເພາະຂອງທ່ານ.

ແຜນວາດດ້ານລຸ່ມນີ້ອະທິບາຍເຖິງ ສາມ ປະເດັນຂອງຄວາມຜູກພັນ ທີ່ພວກເຮົາໄດ້ຄົ້ນຄວ້າໃນ ການສຶກສາການຮຽນການສອນແບບຮຽນຮ່ວມນີ້ ເຊິ່ງປະກອບມີ - **ບ່ອນທີ່ປອດໄພ**, **ຄວາມສາມັກຄີ** ແລະ **ຄວາມສຳຄັນ**.

## ຂອບໜ້າວຽກກ່ຽວກັບຄວາມຜູກພັນຂອງນັກຮຽນກັບໂຮງຮຽນຈະນຳໃຊ້ແນວໃດໃນການສຶກສາຄົ້ນຄວ້ານີ້?

ຂອບໜ້າວຽກກ່ຽວກັບຄວາມຜູກພັນ ແມ່ນໄດ້ຮັບການພັດທະນາຂຶ້ນສະເພາະສຳລັບການສຶກສາຄັ້ງນີ້ ເພື່ອດຶງເອົາຄຸນຄ່າທາງດ້ານວັດທະນະທຳທີ່ຄືກັນຂອງຄົນລາວ ແລະ ຄົນພື້ນເມືອງຂອງອົດສະຕຣາລີມານຳໃຊ້. ຂອບໜ້າວຽກນີ້ໄດ້ຖືກພັດທະນາຂຶ້ນເພື່ອຮັບປະກັນວ່າ ການສຶກສາຄັ້ງນີ້ແມ່ນໄດ້ຄຳນຶງເຖິງປັດໄຈທາງດ້ານສັງຄົມ, ຈິດວິທະຍາ ແລະ ສິ່ງແວດລ້ອມ ທີ່ມີອິດທິພົນຕໍ່ການຮຽນຮູ້ຂອງນັກຮຽນ, ແທນທີ່ຈະພິຈາລະນາພຽງແຕ່ການເບິ່ງຄະແນນສອບເສັງຂອງເຂົາເຈົ້າເທົ່ານັ້ນ.

ຂອບໜ້າວຽກສະບັບນີ້ຍັງໄດ້ຊີ້ນຳ ແລະ ເປັນແນວທາງກ່ຽວກັບເຄື່ອງມືໃນການເກັບກຳຂໍ້ມູນ, ຂະບວນການວິເຄາະຂໍ້ມູນ ແລະ ການຝຶກອົບຮົມຂອງທີມງານສຳຫຼວດຂໍ້ມູນ ນຳອີກ.

---

6 ໂຄງການສຳລັບການປະເມີນນັກຮຽນສາກົນ (PISA) (2018) ຜົນທີ່ໄດ້ຮັບສະແດງໃຫ້ເຫັນວ່າ "ໃນຫຼາຍປະເທດ ແລະ ຂົງເຂດເສດຖະກິດ, ນັກຮຽນທີ່ມີອາຍຸ 15 ປີ, ຜູ້ທີ່ບອກວ່າຮູ້ສຶກຜູກພັນກັບໂຮງຮຽນ ມັກຈະໄດ້ຄະແນນສູງໃນວິຊາຫັດອ່ານ, ເຖິງແມ່ນວ່າຈະເບິ່ງຈາກປັດໄຈດ້ານເສດຖະກິດສັງຄົມຂອງນັກຮຽນ ແລະ ໂຮງຮຽນແລ້ວກໍຕາມ." OECD (2019) ຜົນໄດ້ຮັບ *PISA ປີ 2018 (ເຫຼັ້ມທີ III): ຊີວິດໃນໂຮງຮຽນມີຄວາມໝາຍກັບນັກຮຽນແນວໃດ.* ເຊິ່ງກວມເອົາປະເທດໃນອາຊີຕາເວັນອອກສຽງໃຕ້ເຊັ່ນ ໄທ, ມາເລເຊຍ, ຟີລິບປິນ, ອິນໂດເນເຊຍ.

# ຂອບໜ້າວຽກກ່ຽວກັບຄວາມຜູກພັນຂອງນັກຮຽນກັບໂຮງຮຽນ

## ແມ່ນຫຍັງ?

ຄູໃຫ້ກຳລັງໃຈ, ຄວາມອົບອຸ່ນ, ຄວາມມີນ້ຳໃຈ ແລະ ຄວາມສຳພັນໃນຫ້ອງຮຽນຄືແນວໃດ?

ຫ້ອງຮຽນມີບັນຍາກາດຄືກັນກັບຄອບຄົວ ທີ່ມີການຊ່ວຍເຫຼືອກັນບໍ? ຖ້າມີ/ຫຼືບໍ່ມີ ແມ່ນເປັນແນວໃດ?

ນັກຮຽນຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຮຽນບໍ? ຖ້າມີ, ໃນແບບໃດ? ຖ້າບໍ່ມີ, ຍ້ອນຫຍັງ?

ນັກຮຽນມີຄວາມຮູ້ສຶກວ່າໄດ້ຮັບຄວາມເຄົາລົບຫຼື ປອດໄພຫຼືບໍ? ຖ້າມີ/ຫຼືບໍ່ມີ ແມ່ນເປັນແນວໃດ?

ນັກຮຽນມີຄວາມຫ້າວຫັນໃນການເຂົ້າຮ່ວມກິດຈະກຳກຸ່ມບໍ?

ນັກຮຽນມີສາຍພົວພັນທີ່ແໜ້ນແຟ້ນກັບຄູຂອງເຂົາເຈົ້າບໍ? ແນວໃດ?

### ຄວາມສາມັກຄີ

ນັກຮຽນມີຄວາມມ່ວນຊື່ນໃນໂຮງຮຽນບໍ? ແມ່ນຫຍັງເຮັດໃຫ້ເຂົາເຈົ້າມີສຽງຫົວ?

ນັກຮຽນຫຼິ້ນນຳກັນໃນເດີ່ນໂຮງຮຽນແນວໃດ?

ຄວາມຫຼາກຫຼາຍໄດ້ຮັບການເຊີດຊູໃຫ້ມີຄວາມພົ້ນເດັ່ນຄືແນວໃດ? (ເຊັ່ນ: ປະຫວັດສາດ, ນິດເລື່ອງ, ພາສາ, ເພງ)

### ພື້ນທີ່ອົບອຸ່ນ ແລະ ປອດໄພ

ມີຄວາມຮູ້ສຶກທີ່ວ່າ “ຂ້ອຍໝັ້ນໃຈໃນຕົວເຈົ້າ ແລະ ພ້ອມໃຫ້ການຊ່ວຍເຫຼືອເຈົ້າ” ?

ມີໃຜອີກແດ່ໃນໂຮງຮຽນຫຼືຈາກຊຸມຊົນທີ່ຊ່ວຍຄູ ແລະ ນັກຮຽນເພື່ອກໍ່ໃຫ້ເກີດມີຄວາມຮູ້ສຶກມີຄວາມຜູກພັນ?

ຄູຊີ້ນຳນັກຮຽນຄືແນວໃດ? ນັກຮຽນໄດ້ຮັບຊຸກຍູ້ຜ່ານທາງອາລົມຄວາມຮູ້ສຶກຕ່າງໆບໍ? ແນວໃດ?

## ດ້ວຍວິທີໃດ?

**ວັດທະນາທຳໃນຫ້ອງຮຽນຊ່ວຍບຳລຸງຮັກສາຄວາມຮູ້ສຶກການເປັນສ່ວນໜຶ່ງຂອງນັກຮຽນຄືແນວໃດ?**

**ການມີປະຕິສຳພັນລະຫວ່າງນັກຮຽນ ສົ່ງເສີມຄວາມຮູ້ສຶກຜູກພັນຂອງນັກຮຽນຄືແນວໃດ?**

**ການປະຕິບັດຂອງຄູສົ່ງເສີມການມີຄວາມຮູ້ສຶກຜູກພັນຂອງນັກຮຽນຄືແນວໃດ?**

## ເຫດຜົນ?

ການກະທຳທີ່ຊ່ວຍໃຫ້ນັກຮຽນມີ**ຄວາມຮູ້ສຶກຜູກພັນ** ສ້າງຮາກຖານແກ່ນັກຮຽນມີການຮຽນຮູ້ທີ່ດີຂຶ້ນໄດ້

**ປັດໄຈນອກຫ້ອງຮຽນມີຫຍັງແດ່ ທີ່ສົ່ງເສີມຄວາມຮູ້ສຶກຜູກພັນຂອງນັກຮຽນ?**
(ຕົວຢ່າງ: ຈາກຜູ້ອຳນວຍການ, ຄູສອນທ່ານອື່ນ, ນັກຮຽນໃນຫ້ອງຮຽນອື່ນ, ພໍ່ແມ່/ອາສາສະໝັກໃນຊຸມຊົນ, ການໃຫ້ຄວາມຊ່ວຍເຫຼືອຢູ່ເຮືອນ)

### ການໃຫ້ຄວາມສຳຄັນ

ນັກຮຽນມີຄວາມໝັ້ນໃຈໃນສະຖານະການໃດ? ຍ້ອນຫຍັງ ແລະ ດ້ວຍວິທີໃດ?

ຄູໄດ້ດັດປັບບົດຮຽນໃຫ້ສອດຄ່ອງກັບສະພາບທ້ອງຖິ່ນບໍ? ຖ້າມີ, ດ້ວຍວິທີໃດ?

ນັກຮຽນມີຄວາມສະໝັກໃຈໃນການມີສ່ວນຮ່ວມໃນຫ້ອງຮຽນຫຼືບໍ?

ຄູໄດ້ໃຊ້ຫຼັກຖານເພື່ອວາງເປົ້າໝາຍການສອນກັບຄວາມຕ້ອງການການຮຽນຮູ້ຕົວຈິງບໍ? ດ້ວຍວິທີໃດ?

ນັກຮຽນແຕ່ລະຄົນມີລັກສະນະສະເພາະ ແລະ ພິເສດໃຫ້ເຫັນບໍ? ນັກຮຽນໄດ້ຮັບການຊຸກຍູ້ ແລະທ້າທາຍແນວໃດໃນການຮຽນຂອງເຂົາເຈົ້າ?

ມີການປັບແຜນການສອນເພື່ອໃຫ້ແທດເໝາະກັບຄວາມຕ້ອງການສະເພາະຂອງນັກຮຽນບໍ? ຖ້າມີ, ໄດ້ມີການປັບແນວໃດ? ຖ້າບໍ່ມີ, ຍ້ອນຫຍັງ?

ນັກຮຽນໄດ້ປັບປຸງການຮຽນຂອງເຂົາເຈົ້າຄືແນວໃດ?

ຄູມີຜົນງານຫຍັງແດ່? ຄູເປັນແນວໃດ? ຄູໄດ້ຮັບການຮັບຮູ້ ແລະ ສົ່ງເສີມເພື່ອຄວາມກ້າວໜ້າດ້ານວິຊາການ ແລະ ນຳໃຊ້ທັກສະຕ່າງໆທີ່ເປັນເອກະລັກຄືແນວໃດ?

## ພາກສ່ວນໃດແດ່ທີ່ມີສ່ວນຮ່ວມໃນການສຶກສາຄັ້ງນີ້?

ການສຶກສາຄັ້ງນີ້ແມ່ນນຳພາໂດຍ ກົມສ້າງຄູ, ກະຊວງສຶກສາທິການ ແລະ ກິລາ ໂດຍການຮ່ວມມືກັບບັນດາພະແນກການທີ່ກ່ຽວຂ້ອງຂອງໃນຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ.

### ການອອກແບບ ແລະ ການກຳກັບດູແລໃຫ້ແກ່ການສຶກສາຄັ້ງນີ້

- ກົມສ້າງຄູ

### ການປະເມີນລະດັບພາສາລາວຂອງນັກຮຽນ

- ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

### ກໍລະນີສຶກສາດ້ານຄຸນນະພາບ

- ກົມສ້າງຄູ
- ສູນສົ່ງເສີມການສຶກສາຮຽນຮ່ວມ
- ພະແນກສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ, ສສກ
- ບຸກຄະລາກອນຈາກວິທະຍາໄລຄູ ເປົ້າໝາຍທາງດ້ານຄວາມສະເໝີພາບຍິງ-ຊາຍ ແລະ ການສຶກສາແບບມີສ່ວນຮ່ວມ
- ພະນັກງານແຜນງານບີຄວາ

### ການລົງຕິດຕາມການສອນຂອງຄູ

- ວິທະຍາໄລຄູ
- ຜູ້ເຮັດວຽກສຶກສານິເທດພາຍໃນ
- ຫ້ອງການສຶກສາທິການ ແລະ ກິລາເມືອງ
- ພະແນກສຶກສາທິການ ແລະ ກິລາແຂວງ
- ກົມສາມັນສຶກສາ




## ການສຶກສາຄັ້ງນີ້ໄດ້ຈັດຕັ້ງປະຕິບັດຢູ່ໃສແດ່?

ການສຶກສາຄັ້ງນີ້ແມ່ນກວມເອົາ 30 ເມືອງເປົ້າໝາຍຢູ່ໃນ 7 ແຂວງຄື: ແຂວງຜົ້ງສາລີ, ແຂວງຫຼວງນ້ຳທາ, ແຂວງບໍ່ແກ້ວ, ແຂວງຫົວພັນ, ແຂວງຊຽງຂວາງ, ແຂວງຄຳມ່ວນ ແລະ ແຂວງສະຫວັນນະເຂດ, ໂດຍມີການຄັດເລືອກເອົາໂຮງຮຽນ 4 ແຫ່ງຈາກແຕ່ລະເມືອງໃນບັນດາແຂວງເຫຼົ່ານີ້ ເພື່ອຮັບປະກັນວ່າຈະມີຕົວແທນຂອງນັກຮຽນ, ຄູ, ໂຮງຮຽນ, ແລະ ຊຸມຊົນທີ່ມີຄວາມຫຼາກຫຼາຍ.

ດັ່ງນັ້ນ, ໂຮງຮຽນທີ່ຄັດເລືອກມາຈຶ່ງປະກອບມີ ນັກຮຽນທີ່ບໍ່ໄດ້ນຳໃຊ້ພາສາລາວເປັນຫຼັກຢູ່ເຮືອນ, ນັກຮຽນທີ່ມີຄວາມພິການ, ແລະ ນັກຮຽນທີ່ມີອັດຕາການເຂົ້າຮຽນບໍ່ສະໝໍ່າສະເໝີ. ເງື່ອນໄຂອື່ນໆທີ່ນຳມາພິຈາລະນາໃນການຄັດເລືອກໂຮງຮຽນໄດ້ແກ່ ເພດຂອງຄູສອນ ແລະ ຜູ້ອຳນວຍການໂຮງຮຽນ, ທີ່ຕັ້ງພູມສັນຖານ, ຄວາມຈຳເປັນໃນການຈັດຕັ້ງການສອນຫ້ອງຄວບ, ແລະ ເບິ່ງວ່າໂຮງຮຽນກຳລັງຈັດຕັ້ງປະຕິບັດສົ່ງເສີມການສອນບົດຮຽນຝຶກເວົ້າພາສາລາວ ຫຼື ບໍ່.

# ໄລຍະເວລາຂອງການສຶກສາຄັ້ງນີ້ແມ່ນຢູ່ໃນຊ່ວງໃດ?

**ກໍລະນີສຶກສາດ້ານຄຸນນະພາບ**

ກຸມພາ/ ມີນາ
2024, 2025, 2026

21
ໂຮງຮຽນ

**ການປະເມີນລະດັບພາສາລາວຂອງນັກຮຽນ**

ເມສາ 2024 ປ.1
ເມສາ 2025 ປ.2
ເມສາ 2026 ປ.1 & 3

120
ໂຮງຮຽນ

**ຂໍ້ມູນການຕິດຕາມ**

ພາກຮຽນ 1 ແລະ ພາກຮຽນ 2
ປີ 2023-24
ພາກຮຽນ 1 ແລະ ພາກຮຽນ 2
ປີ 2024-25
ພາກຮຽນ 1 ແລະ ພາກຮຽນ 2
ປີ 2025-26

120
ໂຮງຮຽນ

## ຜົນທີ່ໄດ້ຮັບ

- ຂໍ້ມູນເຊີງເລິກຈາກກໍລະນີສຶກສາດ້ານຄຸນນະພາບ ປີ 2024, 2025 ແລະ 2026.
- ການປ່ຽນແປງໃນການປະເມີນດ້ານລະດັບພາສາລາວຂອງນັກຮຽນໃນໄລຍະ 3 ປີ.
- ແຫຼ່ງຂໍ້ມູນສໍາລັບຄູສອນ.
- ແຫຼ່ງຂໍ້ມູນສໍາລັບຜູ້ປົກຄອງ.



## ຜົນໄດ້ຮັບທີ່ຄາດໄວ້ ແລະ ຂັ້ນຕອນຕໍ່ໄປ

ຄາດວ່າໃນຕອນທ້າຍຂອງປີ 2026, ການສຶກສາການຮຽນການສອນແບບຮຽນຮ່ວມຈະ:

1. **ລະບຸຕົວຢ່າງການປະຕິບັດການສອນຕົວຈິງທີ່ມີປະສິດທິພາບ** ເພື່ອສົ່ງເສີມການຮຽນ ແລະ ການສອນແບບມີສ່ວນຮ່ວມຂອງນັກຮຽນທຸກຄົນ.
2. **ສະແດງໃຫ້ເຫັນການປ່ຽນແປງໃນທາງບວກ** ທີ່ເກີດຂຶ້ນໂດຍຜ່ານກິດຈະກຳດ້ານ ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ທີ່ນຳພາໂດຍ ກະຊວງສຶກສາທິການ ແລະ ກິລາ, ພາຍໃຕ້ການສະໜັບສະໜູນຂອງແຜນງານບີຄວາ.
3. **ຕົກລົງເປັນເອກະພາບດ້ານ ຂອບໜ້າວຽກກ່ຽວກັບຄວາມຜູກພັນຂອງນັກຮຽນກັບໂຮງຮຽນ ທີ່ສ້າງຂຶ້ນສະເພາະ ເພື່ອໃຫ້ເຂົ້າກັບສະພາບຂອງປະເທດລາວ** ທີ່ພາກສ່ວນຕ່າງໆໃນຂະແໜງການສຶກສາ ສາມາດນຳໃຊ້ໄດ້ເພື່ອອອກແບບການສຶກສາຄົ້ນຄວ້າ ແລະ ການປະເມີນຜົນໃນອະນາຄົດ.
4. **ແບ່ງປັນວິທີການທີ່ດີທີ່ສຸດ** ກັບຄູ ແລະ ຊຸມຊົນຂອງໂຮງຮຽນໃນຂອບເຂດກວ້າງຂວາງກວ່າເກົ່າ, ເພື່ອສ້າງສະພາບແວດລ້ອມການຮຽນຮ່ວມທີ່ແທດເໝາະສຳລັບນັກຮຽນທີ່ມີຄວາມຫຼາກຫຼາຍ.

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບ ການສຶກສາດ້ານການຮຽນຮ່ວມ ນັ້ນ, ທ່ານສາມາດສະແກນລະຫັດ QR ນີ້

Australian Aid

ແຜນງານບີຄວາ ແມ່ນແຜນງານທີ່ນຳພາໂດຍ ກະຊວງສຶກສາທິການ ແລະ ກິລາ ແຫ່ງ ສປປ ລາວ,
ໂດຍການສະໜັບສະໜູນຈາກ ລັດຖະບານອົດສະຕຣາລີ

ຈັດພິມໃນເດືອນກຸມພາ ປີ 2025